*Journal of Science and Teacher Education (JLSTE) 1*(1), 72-83

# ການຈັດການຮຽນ-ການສອນວິຊາເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (Learning Together: LT) ສຳລັບນັກສຶກສາ ປີທີ 3 ສາຂາຄູວິທະຍາສາດການເມືອງ ພາກວິຊາຄູວິທະຍາສາດສັງຄົມ, ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ

*ປອ. ນາງ ລັດດາວອນ ຄຳພູວົງ*, ປທ. ບຸນຖ້າຍ ຄັດທະວົງ, ຊອ. ປທ. ນາງ ສຸວັນທອນ ຍົດສະຫວັດ, ປທ. ນາງ ອ່ອນສີ ພູມປັນຍາ; ປທ. ນາງ ວິລັດ ວົງສາຍຄຳ*

*ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ*

---

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງ: 1) ເພື່ອສຶກສາປະສິດທິພາບຂອງບົດສອນວິຊາເສດຖະສາດການເມືອງໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT) ຕາມເກນມາດຕະຖານ 80/80; 2) ເພື່ອຫາດັດສະນີປະສິດທິຜົນທາງການຮຽນ ແລະ 3) ເພື່ອສຶກສາຄວາມເພິ່ງພໍໃຈຕໍ່ການຮຽນ ພາຍຫຼັງໄດ້ຮຽນ ໂດຍໃຊ້ຮູບແບບການຮຽນຮູ້ ແບບກຸ່ມຮ່ວມມື (LT). ກຸ່ມທົດລອງ ແມ່ນ ນັກສຶກສາປີ 3 ທັງໝົດ 32 ຄົນ. ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າມີ 3 ແບບຄື: ບົດສອນທີ່ນຳໃຊ້ເທັກນິກການສອນແບບ (LT) ເຂົ້າໃນການຮຽນ-ການສອນວິຊາເສດຖະສາດການເມືອງ ຈຳນວນ 4 ບົດສອນ; ແບບທົດສອບວັດຜົນການຮຽນ ເຊິ່ງເປັນຊະນິດຂໍ້ສອບແບບເລືອກຕອບ 4 ຕົວເລືອກ ແລະ ແບບສອບຖາມວັດຄວາມເພິ່ງພໍໃຈຕໍ່ການຮຽນ-ການສອນ ເຊິ່ງເປັນແບບສອບຖາມ ມາດຕາສ່ວນປະມານຄ່າ 5 ລະດັບ. ການວິເຄາະຂໍ້ມູນແມ່ນໄດ້ໃຊ້ ໂປຣແກຣມ SPSS ເພື່ອຄານວນຫາ ປະສິດທິພາບຂອງບົດສອນ, ປະສິດທິຜົນຂອງການຮຽນ ແລະ ຄຳນວນຫາລະດັບຄວາມເພິ່ງພໍໃຈຂອງນັກຮຽນ ດ້ວຍການວິເຄາະຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ. ຜົນການຄົ້ນຄວ້າພົບວ່າ ບົດສອນວິຊາ ເສດຖະສາດການເມືອງໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ມີປະສິດທິພາບຂອງຂະບວນການ E1 = 88.44 ແລະ ປະສິດທິພາບຂອງຜົນສຳເລັດຂອງການຮຽນ E2 = 87.50 ສະແດງວ່າ ຊຸດການສອນທີ່ສ້າງຂຶ້ນ ມີປະສິດທິພາບ E1/ E2 = 88.44 / 87.50 ເຊິ່ງສູງກວ່າເກນທີ່ກຳນົດໄວ້ 80/80. ດັດສະນີປະສິດທິຜົນການຮຽນເທົ່າກັບ 0.80 ຫຼື ຄິດເປັນສ່ວນຮ້ອຍເທົ່າກັບ 80 ສ່ວນຮ້ອຍ ໝາຍຄວາມວ່ານັກຮຽນມີຄວາມຮູ້ເພີ່ມຂຶ້ນໃນການຮຽນ ຄິດເປັນສ່ວນຮ້ອຍເທົ່າກັບ 80 ສ່ວນຮ້ອຍ. ຄວາມເພິ່ງພໍໃຈຂອງນັກຮຽນ ທີ່ມີຕໍ່ການຈັດການຮຽນ-ການສອນວິຊາເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ໂດຍລວມແມ່ນຢູ່ໃນລະດັບຫຼາຍ ( $\overline{X}$ = 3.89, S.D = 0.97).

**ຄຳສັບສຳຄັນ:** *ເທັກນິກການສອນແບບກຸ່ມຮ່ວມມື (LT), ປະສິດທິພາບຂອງບົດສອນ,ປະສິດທິຜົນການຮຽນຂອງນັກຮຽນ, ຄວາມເພິ່ງພໍໃຈຂອງນັກຮຽນ.*

---

*ຕິດຕໍ່ພົວພັນ: *ລັດດາວອນ ຄຳພູວົງ* ; *ໂທ: 020 99885850 ; ແຟັກ: 021 770473* ອີເມວ: l.khamphouvong@nuol.edu.la

# The Teaching-Learning Political Economics by Using Group Learning Together Technique for Year Three Political Science Teacher Students at the Department of Social Science, Faculty of Education, National University of Laos

*Latdavone Khamphouvong*, Bounthay Khatthavong, Souvanthone Yossavath, Onsy Phoumpunya, Vilat Vongsaikham*

*Faculty of Education, National University of Laos*

**Abstract**

This study aimed to: 1) examine the efficiency of lesson plans using the Group Learning Together (LT) technique, with a required criterion of 80/80; 2) determine the effectiveness index of students' learning; and 3) assess students' satisfaction with the application of the LT technique in teaching political economics. A total of 32 political teacher students year 3 from one class were used as the experimental group. The research instruments consisted of three components: lesson plans, pre- and post-experimental evaluation forms to assess students' success, and a satisfaction questionnaire. The SPSS program was used to analyze the efficiency of lesson plans (E1/E2), the effectiveness index (EI) of students' learning, and students' satisfaction through mean ($\bar{x}$) and standard deviation (S.D.) analysis. The research results showed that the efficiency of lesson plans for teaching political economics using the Group Learning Together (LT) technique was 88.44/87.50, which exceeded the required criterion of 80/80. The effectiveness index for teaching political economics using the LT technique was 0.80, indicating that students' learning progress reached 80%. The average level of student satisfaction with the teaching of political economics using the LT technique was high ($\bar{x}$ = 3.89; S.D. = 0.97).

***Key words:*** *Group learning together (LT) technique, efficiency of lesson plans, effective index of learning, students' satisfaction.*

## 1. ພາກສະເໜີ

*1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ການພັດທະນາຊັບພະຍາກອນມະນຸດ ກ່ອນອື່ນໝົດຕ້ອງສຸມໃສ່ເສີມຂະຫຍາຍຜົນສຳເລັດຂອງການປະຕິຮູບການສຶກສາກໍຄືການພັດທະນາຊັບພະຍາກອນມະນຸດຕາມ 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກສາແຫ່ງຊາດໃຫ້ມີຄຸນນະພາບ ຕາມມາດຕະຖານຂອງພາກພື້ນ, ສາກົນ ແລະ ທັນສະໄໝ; ສືບຕໍ່ສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີຄວາມຮັບຜິດຊອບຕໍ່ສັງຄົມ, ຕໍ່ພົນລະເມືອງ, ມີສະຕິເຄົາລົບກົດໝາຍ, ມີລະດັບການສຶກສາ, ມີຄວາມຮູ້ດ້ານອາຊີບ ແລະ ມີສີມືການອອກແຮງງານເພີ່ມຂຶ້ນ (ວາລະສານ ອາລຸນວັນໃໝ່, 2016, ໜ້າ. 44)

ໃນການເຊີດຊູຄຸນນະພາບຂອງການສຶກສາກໍຄືການພັດທະນາຊັບພະຍາກອນມະນຸດໃຫ້ສູງຂຶ້ນນັ້ນ, ຕ້ອງປັບປຸງເນື້ອໃນ ແລະ ສ້າງຫຼັກສູດການຮຽນ-ການສອນໃຫ້ແທດເໝາະກັບສະພາບ ແລະ ເງື່ອນໄຂ ເສດຖະກິດໄລຍະໃໝ່ ໄປຄຽງຄູ່ກັບການພັດທະນາຮູບແບບ ແລະ ເທັກນິກ ການຈັດກິດຈະກຳການຮຽນ-ການສອນຂອງຄູ. ຄູໄດ້ນຳເອົາວິທີສອນ ແລະ ເຕັກນິກການສອນຕ່າງໆປະກອບເຂົ້າໃນການຮຽນ-ການສອນ, ໂດຍສະເພາະການສອນແບບເອົາຄູເປັນໃຈກາງເຊິ່ງໄດ້ປ່ຽນແທນດ້ວຍການນຳໃຊ້ວິທີສອນແບບເອົານັກຮຽນເປັນໃຈກາງ ຈຸດປະສົງແມ່ນເພື່ອເຮັດໃຫ້ນັກຮຽນມີສ່ວນຮ່ວມໃນການປະຕິບັດກິດຈະກຳຫຼາຍກວ່າການອະທິບາຍຂອງຄູ. ເຊິ່ງວິທີສອນແບບເອົານັກຮຽນເປັນໃຈກາງແມ່ນປະກອບດ້ວຍຫຼາຍວິທີ ແລະ ຫຼາຍເທັກນິກເຊັ່ນ: ເທັກນິກການຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື, ເຊິ່ງຮູບແບບການຈັດກິດຈະກຳການຮຽນແບບກຸ່ມຮ່ວມມື ທີ່ນິຍົມໃຊ້ທົ່ວໄປໃນປັດຈຸບັນມີ 8 ຮູບແບບຄື: ກິດຈະກຳກຸ່ມຮ່ວມມື STAD ກິດຈະກຳກຸ່ມຮ່ວມມື TAI, ກິດຈະກຳກຸ່ມຮ່ວມມື TGT, ກິດຈະກຳກຸ່ມຮ່ວມມື Jigsaw, ກິດຈະກຳກຸ່ມຮ່ວມມື GI ກິດຈະກຳກຸ່ມຮ່ວມມື CIRC ກິດຈະກຳກຸ່ມຮ່ວມມືCI ແລະ ກິດຈະກຳກຸ່ມຮ່ວມມື LT (ທິດສະນາ ແຂມມະນີ, 2548, ໜ້າ. 102).

ການຈັດການຮຽນ-ການສອນແບບກຸ່ມຮ່ວມມື LT ເປັນວິທີການຈັດການຮຽນຮູ້ທີ່ມຸ້ງເນັ້ນການຈັດໃຫ້ຜູ້ຮຽນໄດ້ຮຽນຮູ້ຮ່ວມກັນເປັນກຸ່ມ ເຊິ່ງຈະປະກອບດ້ວຍສະມາຊິກທີ່ມີຄວາມສາມາດແຕກຕ່າງກັນໂດຍຈະມີຄົນເກັ່ງ, ປານກາງ ແລະ ອ່ອນ ຢູ່ໃນກຸ່ມ, ໃນການເຮັດກິດຈະກຳ ສະມາຊິກໃນກຸ່ມຈະຕ້ອງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ການໃຊ້ຂະບວນການກຸ່ມນີ້ຈະຊ່ວຍຫຼຸດພາລະການສອນຂອງຄູ, ນັກຮຽນມີໂອກາດຝຶກຝົນຕົນເອງ, ຊ່ວຍເຫຼືອກັນ ສິ່ງຜົນໃຫ້ຄົນຮຽນອ່ອນ ແລະ ປານກາງ ມີຜົນການຮຽນດີຂຶ້ນ ແລະ ການຈັດການຮຽນຮູ້ຮ່ວມກັນ ຜູ້ຮຽນ ຮຽນຢ່າງມີຄວາມສຸກ, ເຊິ່ງຜົນງານທີ່ສຳເລັດຂອງກຸ່ມເປັນຜົນງານຂອງທຸກຄົນ (ວິມົນລັດ ສູນທອນໂລດ, 2550, ໜ້າ. 32-33).

ການຈັດກິດຈະກຳການຮຽນ-ການສອນ ໂດຍໃຊ້ກິດຈະກຳກຸ່ມຮ່ວມມື LT ເປັນເທັກນິກໜຶ່ງທີ່ມີຄວາມສຳຄັນຕໍ່ການພັດທະນາການຮຽນ-ການສອນ ທັງສາຂາວິຊາວິທະຍາສາດທຳມະຊາດ ແລະ ວິທະຍາສາດສັງຄົມ ທັງໃນລະບົບສາມັນສຶກສາ ແລະ ລະບົບການສຶກສາວິຊາຊີບ. ວິຊາ ເສດຖະສາດເມືອງ ກໍເປັນວິຊາ

ໜຶ່ງທີ່ນອນໃນ ລະບົບການສຶກສາວິຊາຊີບ,ເຊິ່ງກະຊວງສຶກສາທິການ ແລະ ກິລາໄດ້ເອົາວິຊາດັ່ງກ່າວເຂົ້າໃນຫຼັກສູດການສອນລະດັບປະລິນຍາຕີ, ທັງເປັນວິຊາຫຼັກຂອງຫຼັກສູດການຮຽນ-ການສອນ ສາຂາຄູວິທະຍາສາດການເມືອງ ຂອງ ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ. ວິຊາເສດຖະສາດເມືອງ ມີເນື້ອໃນເວົ້າເຖິງທິດສະດີການຜະລິດ, ການແຈກຢາຍ, ການແລກປ່ຽນ, ການຊົມໃຊ້ ແລະ ກົດເກນເສດຖະກິດ ທີ່ຄອບງຳການຜະລິດ, ການພົວພັນການຜະລິດ ແລະ ການຈໍລະຈອນສິນຄ້າ. ເຊິ່ງເນື້ອໃນທັງໝົດຂອງວິຊາເສດຖະສາດການເມືອງແມ່ນ ລ້ວນແຕ່ເປັນພື້ນຖານທາງທິດສະດີແຫ່ງການຜະລິດ ແລະ ການຄຸ້ມຄອງການຜະລິດຂອງລັດທິມາກ-ເລນິນ ເຊິ່ງເອີ້ນວ່າເສດຖະສາດການເມືອງມາກຊິດສ. ເນື່ອງຈາກເນື້ອໃນຂອງວິຊາດັ່ງກ່າວແມ່ນເວົ້າເຖິງແນວທາງການຜະລິດ ແລະ ການຄຸ້ມຄອງການຜະລິດ, ຈຶ່ງຖືໄດ້ວ່າເປັນວິຊາຮຽນທີຕິດພັນກັບທຳມະຊາດຂອງຄົນໃນການຊົມໃຊ້ວັດຖຸສິ່ງຂອງ ຫຼື ປັດໃຈສີ່ຂອງຄົນ ອັນເຊິ່ງໄດ້ມາຈາກ ການຜະລິດ, ເຊິ່ງເປັນສິ່ງທີ່ຄົນເຮົາພົບເຫັນ, ສັງເກດ ແລະ ໃຊ້ປະໂຫຍດໄດ້ໃນຊີວິດປະຈຳວັນ. ແຕ່ໃນຕົວຈິງແລ້ວການຈັດການຮຽນ-ການສອນວິຊາເສດຖະສາດການເມືອງສ່ວນໃຫຍ່ແມ່ນມີລັກສະນະນາມມະທຳອັນເປັນເຫດເຮັດໃຫ້ຜູ້ຮຽນຈຳນວນຫຼາຍບໍ່ສາມາດຄິດຫຼືເບິ່ງເຫັນພາບໃນບໍລິບົດນັ້ນໄດ້ຢ່າງຊັດເຈນ ຈຶ່ງນຳໄປສູ່ການຂາດຄວາມເຂົ້າໃຈ, ເກີດຄວາມເບື່ອໜ່າຍ ແລະ ມີທັດສະນະຄະຕິທີ່ບໍ່ດີຕໍ່ວິຊານີ້. ສະນັ້ນ,ໃນການສອນເສດຖະສາດການເມືອງຄູບໍ່ຄວນບັນຍາຍແຕ່ຜູ້ດຽວ ເພື່ອນັກຮຽນຈະໄດ້ລົງມືປະຕິບັດດ້ວຍຕົນເອງ, ຫາຄຳຕອບດ້ວຍຕົນເອງ, ຮູ້ຈັກຖາມສົນທະນາ ແລະ ຊອກຫາວິທີຕ່າງໆອັນເປັນແນວທາງ ນຳໄປສູ່ການຄິດວິເຄາະ, ສາມາດເຂົ້າໃຈ ແລະ ວາດພາບໄດ້ວ່າສິ່ງໃດຈະເກີດຂຶ້ນ.

ຈາກການປະເມີນ ຜົນສຳເລັດທາງການຮຽນວິຊາເສດຖະສາດການເມືອງໃນສົກຮຽນຜ່ານມາ ເຫັນວ່າຜົນການຮຽນຂອງນັກສຶກສາຍັງຕ່ຳ ສະແດງອອກຄື ຄະແນນສອບເສັງຈົບໜ່ວຍກິດຂອງນັກສຶກສາຈຳນວນໜຶ່ງຍັງມີເກຣດ D ແລະ F, ນີ້ກໍເນື່ອງຈາກວ່າ ຄູຜູ້ສອນຍັງຂາດການພັດທະນາເທັກນິກການສອນຂອງຕົນເຊັ່ນ ຄູເປັນຜູ້ບັນຍາຍເປັນຫຼັກ ເຮັດໃຫ້ນັກຮຽນຊິນເຄີຍກັບການອາໄສຄູເປັນຜູ້ສະໜອງຂໍ້ມູນໃຫ້, ນັກຮຽນບໍ່ຄ່ອຍມີໂອກາດໄດ້ຖາມ-ສົນທະນາ, ແລະ ບໍ່ຄ່ອຍໄດ້ຝຶກປະຕິບັດດ້ວຍຕົນເອງຈຶ່ງນຳໄປສູ່ການຂາດຄວາມເຂົ້າໃຈ ແລະ ເກີດຄວາມເບື່ອໜ່າຍຕໍ່ການຮຽນ. ສະນັ້ນ, ເພື່ອເປັນການພັດທະນາຂະບວນການຈັດການຮຽນ-ການສອນໃຫ້ມີປະສິດທິພາບ, ໂດຍສະເພາະແມ່ນການສອນວິຊາ ເສດຖະສາດການເມືອງທີ່ມີເນື້ອໃນຕິດພັນກັບຊີວິດປະຈຳວັນ, ຄູຄວນນຳໃຊ້ເທັກນິກການສອນທີ່ເນັ້ນໃຫ້ກຸ່ມຜູ້ຮຽນໄດ້ເຝິກປະຕິບັດ, ແລກປ່ຽນຄວາມຄິດເຫັນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອໃຫ້ບັນລຸເປົ້າໝາຍທີ່ກຳນົດໄວ້ຮ່ວມກັນ. ສະນັ້ນ, ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈ ຢາກນຳເອົາເທັກນິກການຈັດກິດຈະກຳການຮຽນຮູ້ແບບກຸ່ມຮ່ວມມື (Learning Together: LT), ມາໃຊ້ໃນການຮຽນ-ການສອນວິຊາເສດຖະສາດການເມືອງ ເພາະເປັນວິທີ ທີ່ສາມາດພັດທະນາສັກກາຍະພາບຂອງຜູ້ຮຽນ, ແລະຍັງເປັນການສ້າງບັນຍາກາດໃນຫ້ອງຮຽນ, ກຸ່ມຜູ້ຮຽນໄດ້ປຶກສາຫາລືຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຊ່ວຍເສີມສ້າງຄວາມເພິ່ງພໍໃຈໃນການຮຽນ ແລະ ເຮັດໃຫ້ປະສິດທິຜົນຂອງການຮຽນດີຂຶ້ນ.

*1.2. ຄຳຖາມຄົ້ນຄວ້າ*

1. ປະສິດທິພາບຂອງບົດສອນວິຊາ ວິຊາ ເສດຖະສາດການເມືອງ ໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT) ຈະເປັນໄປຕາມເກນ 80/80 ຫຼື ບໍ່?

2. ດັດສະນີປະສິດທິຜົນຂອງການຮຽນວິຊາເສດຖະສາດການເມືອງ ຂອງນັກສຶກສາ ພາຍຫຼັງໄດ້ຮຽນ ໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT) ຢູ່ໃນລະດັບໃດ?

3. ຄວາມເພິງພໍໃຈຕໍ່ການຮຽນວິຊາເສດຖະສາດການເມືອງ ຂອງນັກສຶກສາ ພາຍຫຼັງໄດ້ຮຽນ ໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT) ຢູ່ໃນລະດັບໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອສຶກສາປະສິດທິພາບຂອງບົດສອນວິຊາເສດຖະສາດການເມືອງໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT) ຕາມເກນມາດຕະຖານ 80/80

2. ເພື່ອຫາດັດສະນີປະສິດທິຜົນທາງການຮຽນວິຊາເສດຖະສາດການເມືອງ ຂອງນັກສຶກສາປີ 3 ພາຍຫຼັງໄດ້ຮຽນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT)

3. ເພື່ອສຶກສາຄວາມເພິງພໍໃຈຕໍ່ການຮຽນວິຊາເສດຖະສາດການເມືອງ ຂອງນັກສຶກສາ ປີ 3 ພາຍຫຼັງໄດ້ຮຽນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT)

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

*2.1 ແນວຄິດ ກ່ຽວກັບການຮຽນຮູ້*

ທິດສະດີການຮຽນຮູ້ ແມ່ນມີຄວາມ ສຳຄັນຕໍ່ການຈັດການຮຽນ - ການສອນ. ເລີ່ມຈາກການວິເຄາະຄຸນລັກສະນະຂອງຜູ້ຮຽນ, ການວາງແຜນ ການຈັດການຮຽນ-ການສອນ ລວມເຖິງການວັດ ແລະ ການປະເມີນນັກຮຽນ ຖ້າຜູ້ປະຕິບັດງານ ຫຼື ຄູສາມາດເລືອກທີ່ຈະ ນຳໃຊ້ທິດສະດີທີ່ຕອບສະໜອງຄວາມ

ຕ້ອງການຂອງຜູ້ຮຽນ ຈະເຮັດໃຫ້ນັກຮຽນເກີດການຮຽນຮູ້ຢ່າງມີປະສິດພາບ.

ສຸຣາງ ໂຄຕະກູນ (2550, ໜ້າ. 186) ໄດ້ ກ່າວໄວ້ວ່າ ການຮຽນຮູ້ ໝາຍເຖິງ ການປ່ຽນແປງພຶດຕິກຳ ທີ່ເປັນຜົນມາຈາກປະສົບການ ທີ່ຄົນເຮົາ ໄດ້ພົວພັນກັບສິ່ງແວດລ້ອມ ຫລື ຜ່ານການຝຶກອົບຮົມ ລວມທັງການປ່ຽນແປງຄວາມຮູ້ຂອງຜູ້ຮຽນ

ສີຣິອອນ ວິຊາວຸດ (2554, ໜ້າ. 2) ກ່າວໄວ້ວ່າ: ການຮຽນຮູ້ປະກອບດ້ວຍອົງປະກອບ 3 ປະການຄື: 1) ມະນຸດຕ້ອງຜ່ານການຫັນປ່ຽນຈາກຄວາມບໍ່ຮູ້ໄປສູ່ການຮູ້, ບໍ່ສາມາດ ໄປສູ່ສາມາດ, ບໍ່ເຄີຍປະຕິບັດ ໄປສູ ປະຕິບັດ; 2) ການປ່ຽນແປງພຶດຕິກຳ ແມ່ນຖາວອນ; 3) ການປ່ຽນແປງພຶດຕິກຳນັ້ນ ເກີດຈາກປະສົບການ, ການຝຶກຝົນ ແລະ ການຝຶກປະຕິບັດ

*2.2 ການຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື(LT)*

*ຄວາມໝາຍຂອງ ການຮຽນຮູ້ແບບກຸ່ມຮ່ວມມື (LT)*

David Johnson and Robert Johnson ໄດ້ພັດທະນາຮູບແບບ ການຮຽນຮູ້ແບບກຸ່ມຮ່ວມມື ໂດຍໃຊ້ເທັກນິກ LT (Learning Together) ໃນປີ 1986 ທີ່ ມະຫາວິທະຍາໄລ ມິນີໂຊຕ້າ, ເຊິ່ງ ຮູບແບບ ການຮຽນຮູ້ແບບກຸ່ມຮ່ວມມືນີ້ ປະກອບດ້ວຍນັກຮຽນ ກຸ່ມລະ 4-5 ຄົນ ທີ່ມີຄວາມສາມາດແຕກຕ່າງກັນ ເຮັດວຽກຮ່ວມກັນຕາມການມອບໝາຍຂອງກຸ່ມ ແລະ ໄດ້ຮັບການຍ້ອງຍໍຊົມເຊີຍ ຫຼື ໄດ້ຮັບລາງວັນ ຕາມຜົນງານຂອງກຸ່ມ (ວັດສະລາ ເລົ່າຮຽນດີ, 2548) ໂດຍມີຫຼັກການຄື:

- ນັກຮຽນ ມີຄວາມສຳພັນທີ່ດີຕໍ່ກັນ ແລະ ຊ່ວຍເຫຼືອເຊິ່ງກັນແລະ ກັນ
- ນັກຮຽນມີຄວາມຮັບຜິດຊອບຕໍ່ຕົນເອງ
- ນັກຮຽນມີທັກສະໃນການເຮັດວຽກຮ່ວມກັນ

ທິດສະນາ ແຂມມະນີ (2548) ໄດ້ອະທິບາຍເຖິງການຮຽນຮູ້ແບບຮ່ວມມືກັນໂດຍໃຊ້ເທັກນິກ LT (Learning Together) ເປັນການຮຽນຮູ້ແບບກຸ່ມຮ່ວມມືອີກຮູບແບບໜຶ່ງທີ່ມີຂະບວນການທີ່ງ່າຍ ບໍ່ຊັບຊ້ອນ ທີ່ແບ່ງກຸ່ມຜູ້ຮຽນກຸ່ມລະ 4 ຄົນໂດຍຈັດຜູ້ຮຽນເຂົ້າກຸ່ມຕາມຄວາມສາມາດທັງເກັ່ງ, ກາງ, ອ່ອນ ຢູ່ນຳກັນ, ກຸ່ມຍ່ອຍກຸ່ມລະ 4 ຄົນສຶກສາເນື້ອໃນຮ່ວມກັນໂດຍກຳໜົດໃຫ້ແຕ່ລະຄົນມີບົດບາດໜ້າທີ່ຊ່ວຍກຸ່ມໃນການຮຽນຮູ້ເຊັ່ນ: ສະມາຊິກຄົນທີ1 ອ່ານຄຳຖາມ, ສະມາຊິກຄົນທີ່ 2 ຊອກຫາຄຳຕອບ, ສະມາຊິກຄົນທີ່ 3 ຊອກຫາຄຳຕອບ ແລະ ສະມາຊິກຄົນທີ່ 4 ກວດຄືນຄຳຕອບ. ສະມາຊິກແຕ່ລະຄົນໃນກຸ່ມສະຫຼຸບຄຳຕອບຮ່ວມກັນ ແລະ ສົ່ງຄຳຕອບໃຫ້ອາຈານ, ຜົນງານຂອງກຸ່ມໄດ້ຄະແນນເທົ່າໃດ, ສະມາຊິກໃນກຸ່ມນັ້ນຈະໄດ້ຄະແນນເທົ່າກັນໝົດທຸກຄົນ. ດັ່ງນັ້ນຜູ້ສອນຈະຕ້ອງໃຊ້ເທັກນິກການເສີມແຮງເຊັ່ນ: ໃຫ້ລາງວັນ, ແລະ ໃຫ້ຄຳຊົມເຊີຍເປັນຕົ້ນ. ສະມາຊິກກຸ່ມຕ້ອງມີການກຳນົດເປົ້າໝາຍຮ່ວມກັນ, ຊ່ວຍເຫຼືອກັນເພື່ອຄວາມສຳເລັດຂອງກຸ່ມ.

ອາພອນ ໃຈທ່ຽງ (2550, ໜ້າ. 23) ໄດ້ໃຫ້ຄວາມໝາຍ ກຸ່ມການຮຽນຮູ້ຮ່ວມກັນ LT ເປັນເທັກນິກການຈັດກິດຈະກຳທີ່ໃຫ້ສະມາຊິກໃນກຸ່ມມີຄວາມຮັບຜິດຊອບ, ມີບົດບາດໜ້າທີ່ຮ່ວມກັນທຸກຄົນ ເຊັ່ນ: ເປັນຜູ້ອ່ານ, ເປັນຜູ້ຈົດບັນທຶກ, ເປັນຜູ້ລາຍງານ ແລະ ອື່ນໆ. ທຸກຄົນຊ່ວຍກັນເຮັດວຽກເພື່ອຜົນ ສຳເລັດຂອງກຸ່ມ ແລ້ວນຳສະເໜີ ຕໍ່ຜູ້ສອນ.

*ວັດຖຸປະສົງ ແລະ ເປົ້າໝາຍ ການຮຽນຮູ້ແບບກຸ່ມຮ່ວມມື ເທັກນິກ (LT)*

ທິດສະນາ ແຂມມະນີ (2548, ໜ້າ. 69-90) ໄດ້ອະທິບາຍ ກ່ຽວກັບວັດຖຸປະສົງຂອງຮູບແບບ ການຮຽນຮູ້ແບບກຸ່ມຮ່ວມມື ຕາມເທັກນິກ LT ດັ່ງນີ້:

- ເພື່ອຊ່ວຍໃຫ້ຜູ້ຮຽນໄດ້ຮຽນຮູ້ເນື້ອຫາສາລະຕ່າງໆດ້ວຍຕົນເອງ, ດ້ວຍຄວາມຮ່ວມມື ແລະ ຄວາມຊ່ວຍເຫຼືອເຊິ່ງກັນ ແລະ ກັນ.
- ເພື່ອເປັນການພັດທະນາທັກສະທາງສັງຄົມຕ່າງໆເຊັ່ນ: ທັກສະການສື່ສານ, ທັກສະການເຮັດວຽກຮ່ວມກັບຄົນອື່ນ, ທັກສະການສ້າງຄວາມສຳພັນ.
- ເພື່ອເປັນການສົ່ງເສີມໃຫ້ຜູ້ຮຽນມີທັກສະການສະແຫວງຫາຄວາມຮູ້, ທັກສະການຄິດ, ການແກ້ໄຂບັນຫາ.

ສຸວິດ ມູນຄຳ (2546, ໜ້າ. 91)ໄດ້ອະທິບາຍ ກ່ຽວກັບວັດຖຸປະສົງຂອງຮູບແບບ ການຮຽນຮູ້ແບບກຸ່ມຮ່ວມມື ຕາມເທັກນິກ LT ດັ່ງນີ້:

- ເພື່ອຝຶກທັກສະ ສະເພາະເລື່ອງເຊັ່ນ: ການທົດລອງ, ການແກ້ບັນຫາ ຫຼື ການສະຫຼຸບຜົນ
- ເພື່ອປູກຝັງຄຸນລັກສະນະທີ່ເພິ່ງປະສົງໃນດ້ານຄວາມຮັບຜິດຊອບການເຮັດວຽກຮ່ວມກັບຜູ້ອື່ນ.

*ອົງປະກອບ ການຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື LT*

ອົງປະກອບ ການຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື LT ຕາມແນວຄິດຂອງ (Johnson and Johnson, 1986 ອ້າງໃນ ທິບພາວັນ ທອງປານ, 2559) ແມ່ນ ມີອົງປະກອບ 5 ປະການທີ່ສາຄັນເຊັ່ນ:

- ການມີປະຕິສຳພັນດ້ວຍການປະເຊີນໜ້າ (Face- to-Face- Interaction) ເປັນການຈັດຜູ້ຮຽນທີ່ມີລັກສະນະຕ່າງກັນດ້ານຄວາມສາມາດ, ຄວາມສົນໃຈ ແລະ ອື່ນໆເພື່ອໃຫ້ຜູ້ຮຽນ ໄດ້ອາໄສຫຼັກເພິ່ງພາກັນໂດຍຖືວ່າທຸກຄົນມີຄວາມສຳຄັນເທົ່າທຽມກັນ ແລະ ຈະຕ້ອງເພິ່ງພາກັນເພື່ອຄວາມສຳເລັດຮ່ວມກັນ.

- ຄວາມຮັບຜິດຊອບເປັນລາຍບຸກຄົນ (Individual Accountability) ສະມາຊິກກຸ່ມທຸກຄົນຕ້ອງມີຄວາມຮັບຜິດຊອບຮ່ວມກັນໃນການປະຕິບັດງານຂອງກຸ່ມ ການຮຽນຮູ້ທີ່ດີຕ້ອງອາໄສການຫັນໜ້າເຂົ້າຫາກັນ, ມີປະຕິສຳພັນກັນເພື່ອແລກປ່ຽນຄວາມຄິດເຫັນ, ຂໍ້ມູນ ແລະ ການຮຽນຮູ້ຕ່າງໆເພື່ອໃຫ້ທຸກຄົນໃນກຸ່ມເກີດການຮຽນຮູ້ຮ່ວມກັນ

- ທັກສະການຮ່ວມມືກັນໃນສັງຄົມ (Cooperative Social Skill) ການຮຽນຮູ້ຮ່ວມກັນຕ້ອງອາໄສທັກສະທາງສັງຄົມໂດຍສະເພາະທັກສະໃນການເຮັດວຽກຮ່ວມກັນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ,ໃຫ້ຄວາມໄວ້ວາງໃຈກັນ ແລະ ຍອມຮັບຄວາມຄິດເຫັນຂອງກັນ ແລະ ກັນ ເພື່ອໃຫ້ບັນລຸຜົນຕາມຄວາມມຸ້ງໝາຍຂອງກຸ່ມຢ່າງມີປະສິດທິພາບ.

- ການເພິ່ງພາ ແລະ ເກື້ອກູນກັນ (Positive Interdependence) ການຮຽນຮູ້ຮ່ວມກັນຄວນມີການວິເຄາະຂະບວນການກຸ່ມທີ່ໃຊ້ໃນການເຮັດວຽກ, ກຳນົດວັດຖຸປະສົງຂອງກຸ່ມ ແລະ ກຳນົດບົດບາດຂອງສະມາຊິກໃນກຸ່ມໃຫ້ຊັດເຈນ ແລະ ຕ້ອງເຂົ້າໃຈວ່າຜົນສຳເລັດຂອງບຸກຄົນໃນກຸ່ມຂຶ້ນຢູ່ກັບຜົນສຳເລັດຂອງກຸ່ມ, ຄວາມສຳເລັດຂອງທຸກຄົນ ແລະ ຂອງກຸ່ມຂຶ້ນກັບໝົດທຸກຄົນ. ດັ່ງນັ້ນ, ແຕ່ລະຄົນມີຄວາມຮັບຜິດຊອບໃນບົດບາດຂອງຕົນເອງ ແລະ ຊ່ວຍເຫຼືອສະມາຊິກຄົນອື່ນໆ ເພື່ອປະໂຫຍດຮ່ວມກັນ. ການຈັດກຸ່ມເພື່ອຊ່ວຍຜູ້ຮຽນ ແລະ ຊ່ວຍເຫຼືອເກື້ອກູນມີຫຼາຍທາງເຊັ່ນ: ການຮຽນໃນເປົ້າໝາຍດຽວກັນ, ການຮຽນຮ່ວມກັນ, ການໃຫ້ລາງວັນຂອງກຸ່ມ, ການມອບໝາຍໜ້າທີ່ໃນການເຮັດວຽກຮ່ວມກັນກັບແຕ່ລະຄົນ.

- ຂະບວນການກຸ່ມ (Group Processing) ເປັນ ການວິເຄາະຂະບວນການເຮັດວຽກຂອງກຸ່ມເພື່ອຊ່ວຍໃຫ້ກຸ່ມເກີດການຮຽນຮູ້ ແລະ ປັບປຸງການເຮັດວຽກໃຫ້ດີຂຶ້ນ, ການວິເຄາະຂະບວນການກຸ່ມຄວບຄຸມການວິເຄາະກ່ຽວການເຮັດວຽກຂອງກຸ່ມ, ພຶດຕິກຳຂອງສະມະຊິກກຸ່ມ ແລະ ຜົນງານຂອງກຸ່ມ, ການວິເຄາະການຮຽນຮູ້ນີ້ອາດຈະເຮັດໄດ້ໂດຍຄູ, ຜູ້ຮຽນ ຫຼື ທັງສອງຝ່າຍ, ການວິເຄາະຂະບວນການກຸ່ມເປັນຍຸດທະວິທີໜຶ່ງທີ່ສົ່ງເສີມໃຫ້ກຸ່ມຕັ້ງໃຈເຮັດວຽກເພາະຮູ້ວ່າຈະໄດ້ຮັບຂໍ້ມູນຍ້ອນກັບ ແລະ ຊ່ວຍຝຶກທັກສະການຮູ້ຄິດ ຄືສາມາດປະເມີນ ການຄິດ ແລະ ພຶດຕິກຳຂອງຕົນ ທີ່ໄດ້ເຮັດໄປ.

*ຂະບວນການ ແລະ ຂັ້ນຕອນ ການຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື LT*

ທິດສະນາ ແຂມມະນີ (2552) ໄດ້ນຳສະເໜີ ຂະບວນການການຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື LT ໄວ້ 4 ຂັ້ນຕອນຄື:

1) ຈັດນັກຮຽນເປັນກຸ່ມຍ່ອຍເຊິ່ງແຕ່ລະຄົນໃນກຸ່ມມີເພດ ແລະ ຄວາມສາມາດຕ່າງກັນ ( ເກັ່ງ-ກາງ-ອ່ອນ) ກຸ່ມລະ 4 ຄົນ

2) ກຸ່ມຍ່ອຍກຸ່ມລະ 4 ຄົນ ສຶກສາເນື້ອໃນຮ່ວມກັນໂດຍກຳນົດໃຫ້ແຕ່ລະຄົນມີບົດບາດໜ້າທີ່ຊ່ວຍກັນໃນການຮຽນຮູ້ ຕົວຢ່າງເຊັ່ນ:

- ສະມະຊິກຄົນທີ 1: ອ່ານຄຳຖາມ
- ສະມາຊິກຄົນທີ 2: ຊອກຫາຄຳຕອບ
- ສະມະຊິກຄົນທີ 3: ຊອກຫາຄຳຕອບ
- ສະມະຊິກຄົນທີ 4: ຈົດຄຳຕອບ

3) ສະມະຊິກທຸກຄົນໃນກຸ່ມສະຫຼຸບຄຳຕອບຮ່ວມກັນແລ້ວສົ່ງຄຳຕອບ ຫຼື ຜົນງານໃຫ້ຄູ

4) ຜົນງານກຸ່ມໄດ້ຄະແນນເທົ່າໃດ, ສະມະຊິກທຸກຄົນໃນກຸ່ມຈະໄດ້ຄະແນນນັ້ນເທົ່າກັນໝົດທຸກຄົນ

ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ (2545) ໄດ້ນາສະເໜີ ຂະບວນການ ການຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື LT ໄວ້ 5 ຂັ້ນຕອນຄື:

1) ຂັ້ນກະກຽມ ແບ່ງນັກຮຽນເປັນກຸ່ມໆລະ 3-5 ຄົນ ຄູແນະນຳທັກສະໃນການຮຽນຮ່ວມກັນ, ແນະນຳລະບຽບຂອງກຸ່ມ, ບົດບາດ ແລະ ໜ້າທີ່ຂອງສະມາຊິກໃນກຸ່ມແລ້ວແຈ້ງຈຸດປະສົງການຮຽນຮູ້.

2) ຂັ້ນສອນ ຄູທົບທວນຄວາມຮູ້ພື້ນຖານທີ່ຈຳເປັນແກ່ນັກຮຽນ, ສອນເນື້ອໃນບົດຮຽນໃໝ່ ແລະ ແນະນຳແຫຼ່ງຂໍ້ມູນ, ມອບໝາຍພາລະວຽກງານໃຫ້ແຕ່ລະກຸ່ມ, ອະທິບາຍຂັ້ນຕອນການເຮັດວຽກ, ກຳນົດເວລາໃນການເຮັດກິດຈະກຳ.

3) ຂັ້ນເຮັດກິດຈະກຳກຸ່ມ ຄູແຈກໃບກິດຈະກຳ ກຸ່ມລະ 1 ຊຸດ ແຕ່ລະກຸ່ມແບ່ງໜ້າທີ່ສະມາຊິກໃນກຸ່ມດັ່ງນີ້:

- ຄົນທີ 1: ອ່ານຄຳສັ່ງ, ຂັ້ນຕອນການເຮັດວຽກ ຫຼື ຄຳຖາມ
- ຄົນທີ 2 ແລະ 3: ຄິດວິເຄາະ ແລະ ຊອກຫາຄຳຕອບ
- ຄົນທີ 4: ກວດຄືນຄວາມຖືກຕ້ອງຂອງຄຳຕອບ

ທຸກຄົນປະຕິບັດກິດຈະກຳຕາມໜ້າທີ່, ແຕ່ລະກຸ່ມສົ່ງເຈ້ຍຄຳຕອບພຽງ 1 ຊຸດເປັນຜົນງານຂອງກຸ່ມເຊິ່ງທຸກຄົນໃນກຸ່ມຈະໄດ້ຄະແນນເທົ່າກັນ, ສະມາຊິກພາຍໃນກຸ່ມຈະມີການໝູນວຽນປ່ຽນໜ້າທີ່ກັນໃນຄຳຖາມຕໍ່ໄປ.

4) ຂັ້ນກວດສອບ ແລະ ທົດສອບ ຄູກວດຜົນງານກຸ່ມ ອາດສຸ່ມຕົວແທນກຸ່ມ ມານຳສະເໜີຜົນງານ ຫຼື ທົດສອບຍ່ອຍເປັນລາຍບຸກຄົນ ບໍ່ມີການຊ່ວຍເຫຼືອກັນ.

5) ຂັ້ນສະຫຼຸບບົດຮຽນ ແລະ ປະເມີນຜົນການເຮັດວຽກກຸ່ມ, ຄູ ແລະ ນັກຮຽນຮ່ວມມືກັນສະຫຼຸບບົດຮຽນ, ຄູປະເມີນຜົນພຶດຕິກຳການເຮັດວຽກກຸ່ມ. ຖ້າແຜນກິດຈະກຳການຮຽນຮູ້ໃດມີການທົດສອບຍ່ອຍໃຫ້ນຳຄະແນນຂອງທຸກຄົນມາຫາຄ່າສະເລ່ຍມາເປັນຄະແນນກຸ່ມ ໃຫ້ການເສີມແຮງໃຫ້ກຸ່ມທີ່ໄດ້ຄະແນນກຸ່ມຫຼາຍທີ່ສຸດໂດຍໃຫ້ຄຳຊົມເຊີຍໃຫ້ລາງວັນ ຫຼື ຕິດລາຍຊື່ກຸ່ມຄົນເກັ່ງ ທີ່ກະດານດຳໜ້າຊັ້ນຮຽນ ແລະ ໃຫ້ກຳລັງໃຈກຸ່ມທີ່ຍັງບໍ່ປະສົບຜົນສຳເລັດ.

### *2.3 ທົບທວນບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງ*

ສົມສີ ຢ່າງຕັ່ງມົວ (2016) ສຶກສາການຈັດການຮຽນ-ການສອນ ວິຊາສຶກສາພົນລະເມືອງໂດຍໃຊ້ ຮູບແບບຮຽນຮູ້ຮ່ວມກັນ (LT) ສຳລັບນັກຮຽນຊັ້ນມັດທະຍົມ ປີທີ 5 ທີ່ໂຮງຮຽນ ມສ ວຽງໄຊ, ເມືອງວຽງໄຊ, ແຂວງຫົວພັນ. ມີຈຸດປະສົງ: 1) ເພື່ອສຶກສາປະສິດທິພາບຂອງບົດສອນ ວິຊາ ສຶກສາພົນລະ ເມືອງຂັ້ນ ມ.5 ໂດຍໃຊ້ຮູບແບບຮຽນຮູ້ຮ່ວມກັນ ( LT) ຕາມເກນ80/80 2) ເພື່ອຫາຄ່າດັດຊະນີຄວາມກ້າວໜ້າຂອງຜົນການຮຽນຮູ້ ຂອງນັກຮຽນ ແລະ 3) ເພື່ອສຶກສາທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ກັບການຮຽນວິຊາສຶກສາພົນລະເມືອງ ພາຍຫຼັງໄດ້ຮັບການສິດສອນ ໂດຍໃຊ້ແບບຮຽນຮູ້ຮ່ວມກັນ ( LT). ຜົນການສຶກສາພົບວ່າ: 1) ປະສິດທິພາບຂອງບົດສອນ ມີຄ່າເທົ່າກັບ 86.25/86.66 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ 80/80; 2) ດັດຊະນີປະສິດທິຜົນຂອງການຈັດການຮຽນຮູ້ຮ່ວມມືກັນ ມີຄ່າເທົ່າກັບ 0.74; 3) ທັດສະນະຄະຕິ ນັກຮຽນຂັ້ນ ມ.5 ທີ່ຮຽນຮູ້ຮ່ວມກັນ ໂດຍຮູບແບບການຮຽນຮູ້ຮ່ວມມືກັນ (LT) ຄ່າສະເລ່ຍເທົ່າກັບ $\overline{X}$= 4.72 ແລະ ຄ່າ S.D = 0.43. ເຫັນວ່າຢູ່ໃນລະດັບເຫັນດີທີ່ສຸດ. ການຈັດການຮຽນຮູ້ຮ່ວມມືກັນ ວິຊາສຶກສາພົນລະເມືອງ ຂັ້ນ ມ. 5 ໂດຍການຈັດການຮຽນຮູ້ຮ່ວມມືກັນ (LT) ເຮັດໃຫ້ນັກຮຽນມີຜົນສຳເລັດທາງການຮຽນເພີ່ມຂຶ້ນ ແລະ ນັກຮຽນມີທັດສະນະຄະຕິເຫັນດີທີ່ສຸດຕໍ່ຮູບແບບການຮຽນຮູ້ຮ່ວມມືກັນ ດັ່ງນັ້ນ, ຈຶ່ງສົມຄວນສະໜັບສະໜູນໃຫ້ຄູຜູ້ສອນນຳເອົາຮູບແບບການຮຽນ-ການສອນດັ່ງກ່າວໄປໃຊ້ສອນກັບນັກຮຽນໃນລະດັບຂັ້ນອື່ນຕໍ່ໄປ.

ສອນທະວິສຸກ ປ້ອງວັນນະຄົມ (2018) ສຶກສາກ່ຽວກັບການຈັດການຮຽນ- ການສອນວິຊາປະຊາກອນສຶກສາ ແລະ ສິ່ງແວດລ້ອມໂດຍການນຳໃຊ້ເທັກນິກ LT ສຳລັບນັກສຶກສາປີ2 ສາຍຄູ ICT ພື້ນຖານ ລະບົບ 12+4. ຈຸດປະສົງເພື່ອ, 1) ສຶກສາປະສິດທິພາບຂອງບົດສອນວິຊາ ປະຊາກອນ ແລະ ສິ່ງແວດລ້ອມ ໂດຍນຳໃຊ້ການສອນແບບຮຽນຮູ້ຮ່ວມກັນ (LT) ຕາມເກນ $E_1/E_2$ (80/80). 2) ເພື່ອສຶກສາປະສິດທິຜົນທາງການຮຽນຂອງນັກຮຽນ; 3) ເພື່ອສຶກສາທັດສະນະຄະຕິຂອງນັກຮຽນທີ່ມີຕໍ່ກັບການຮຽນ. ຜົນການຄົ້ນຄວ້າພົບວ່າ: 1) ປະສິດທິພາບຂອງບົດສອນ ໂດຍໃຊ້ຮູບແບບການຮຽນ - ການສອນເທັກນິກ LT ມີປະສິດທິພາບສູງກວ່າເກນທີ່ຕັ້ງໄວ້ ເທົ່າກັບ 82.77/85.41 ເຊິ່ງເປັນໄປຕາມເກນມາດຕະຖານ 80/80 ທີ່ກຳນົດໄວ້ ແລະ ເຫັນວ່າ :ປະສິດທິຜົນ EI ເທົ່າ .07194 ຫຼື ເທົ່າກັບ 71.94% ການຮຽນຮູ້ຂອງນັກສຶກສາມີການພັດທະນາເພີ່ມຂຶ້ນ 71.94%. 2) ນັກສຶກສາມີທັດສະນະຄະຕິ ຕໍ່ການຮຽນ-ການສອນ ວິຊາປະຊາກອນສຶກສາ ແລະ ສິ່ງແວດລ້ອມ ໂດຍນຳໃຊ້ເທັກນິກ LT ເຫັນດີຫຼາຍ

## 3. **ວິທີດຳເນີນການຄົ້ນຄວ້າ**

ການສຶກສາຄັ້ງນີ້ ຜູ້ສຶກສາໄດ້ເຮັດການທົດລອງສອນໂດຍການຈັດການຮຽນ-ການສອນວິຊາເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ສຳລັບນັກສຶກສາປີທີ 3 ສາຂາຄູການເມືອງ ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, ເຊິ່ງຜູ້ຄົ້ນຄວ້າໄດ້ໃຊ້ແຜນການຄົ້ນຄວ້າແບບ 0ne Group pre-test post-test Design (ລ້ອນ ສາຍຍົດ ແລະ ອັງຄະນາ ສາຍຍົດ, 2538, ໜ້າ. 202) ດັ່ງນີ້:

| ຮູບແບບ | Pre-test | Treatment | Post-test |
|---|---|---|---|
| ກຸ່ມທົດລອງ | T1 | X | T2 |

T1 ແທນໃຫ້ການທົດສອບກ່ອນຮຽນ

X ແທນໃຫ້ການຈັດການຮຽນ-ການສອນໂດຍນຳໃຊ້ການຮຽນຮູ້ແບບຮ່ວມມື LT

T2 ແທນໃຫ້ການທົດສອບຫຼັງຮຽນ

### *3.1 ກຸ່ມທົດລອງ*

ນັກສຶກສາປີ 3 ສາຂາຄູການເມືອງ ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, ພາກຮຽນທີ I ສົກສຶກສາ 2019-2020 ຈຳນວນ 1 ຫ້ອງຮຽນ ມີນັກສຶກສາທັງໝົດ 32 ຄົນ

### *3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ມີດັ່ງນີ້:

1) ບົດສອນທີ່ນຳໃຊ້ເທັກນິກການສອນແບບ (LT) ເຂົ້າໃນການຮຽນ-ການສອນວິຊາເສດຖະສາດການເມືອງ ຈຳນວນ 4 ບົດ ແຕ່ລະບົດໃຊ້ເວລາຢູ່ 2 ຊົ່ວໂມງ.

2) ແບບທົດສອບວັດຜົນການຮຽນວິຊາເສດຖະສາດການເມືອງ ຂອງນັກສຶກສາຄູການເມືອງ ປີ 3, ຊະນິດຂໍ້ສອບແບບເລືອກຕອບ 4 ຕົວເລືອກ ຈຳນວນ 20 ຂໍ້ ໃນ 4 ບົດສອນ ໂດຍໃຊ້ທົດສອບ ກ່ອນ ແລະ ຫຼັງສຳເລັດການດຳເນີນການສອນທັງ 4 ບົດສອນ. ນອກນັ້ນ ແຕ່ລະບົດສອນມີໃບກິດຈະກຳລະຫວ່າງຮຽນ ແລະ ແບບປະເມີນທັກສະລະຫວ່າງຮຽນໃນການປະຕິບັດກິດຈະກຳ.

3) ແບບສອບຖາມຄວາມເພິ່ງພໍໃຈຕໍ່ການຮຽນ-ການສອນ ໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື(LT)ເຂົ້າໃນການສອນວິຊາເສດຖະສາດການເມືອງ ຂອງນັກສຶກສາຄູການເມືອງປີ ໂດຍປະກອບມີ 4 ດ້ານຄື: ດ້ານເນື້ອໃນບົດຮຽນ, ດ້ານການນາໃຊ້ສື່ການສອນ, ດ້ານການຈັດກິດະກຳການຮຽນ-ການສອນ ແລະ ດ້ານການວັດ ແລະ ປະເມີນຜົນ. ເຊິ່ງແບບສອບຖາມແມ່ນເປັນແບບມາດຕາສ່ວນປະມານຄ່າ 5 ລະດັບຈຳນວນ 20 ຂໍ້.

*3.3 ວິທີເກັບກຳຂໍ້ມູນ*

ຜູ້ຄົ້ນຄວ້າໄດ້ດຳເນີນການທົດລອງດ້ວຍການເກັບຂໍ້ມູນ ໂດຍນຳບົດສອນມາດຳເນີນການສອນກັບ ນັກສຶກສາຄູການເມືອງ ປີ 3 ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ເຊິ່ງມີຂັ້ນຕອນດັ່ງນີ້:

1. ນຳໜັງສືອະນຸຍາດເກັບຂໍ້ມູນຈາກຄະນະບໍດີ ຄະນະສຶກສາສາດ ໄປຍັງພາກວິຊາວິທະຍາສາດສັງຄົມເພື່ອຢື່ນສະເໜີຂໍເກັບຂໍ້ມູນນຳ ສາຂາວິຊາຄູການເມືອງ

2. ປະສານງານກັບຄູປະຈຳວິຊາເພື່ອກຽມນັກສຶກສາເປັນກຸ່ມທົດລອງ

3. ການດຳເນີນການສອນແມ່ນທົດສອບກ່ອນຮຽນກັບນັກສຶກສາຄູການເມືອງ ປີ 3 ຈຳນວນ 32 ຄົນ ໂດຍໃຊ້ແບບທົດສອບທີ່ຜູ້ຄົ້ນຄວ້າສ້າງຂຶ້ນ 20 ຂໍ້ ໃນ 4 ບົດສອນ, ບົດສອນລະ 5 ຂໍ້.

4. ຜູ້ຄົ້ນຄວ້າດຳເນີນການສອນ 4 ບົດສອນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື(LT) ໃນວິຊາເສດຖະສາດການເມືອງ ໃນເລື່ອງ: ບົດສອນທີ 1: ສິນຄ້າ, ເງິນ ແລະ ການກຳເນີດລັດທິທຶນນິຍົມ ; ບົດສອນທີ 2: ສິນຄ້າ, ເງິນ ແລະ ການກຳເນີດລັດທິທຶນນິຍົມ (ຕໍ່); ບົດສອນທີ 3 ຂະບວນວິວັດແຫ່ງການຜະລິດທຶນນິຍົມ; ບົດສອນທີ 4 ຂະບວນວິວັດແຫ່ງການຜະລິດທຶນນິຍົມ (ຕໍ່); ເຊິ່ງໄດ້ດຳເນີນການສອນກັບນັກສຶກສາຄູການເມືອງ ປີ 3 ພາກວິຊາວິທະຍາສາດສັງຄົມ ຄະນະສຶກສາສາດ ຈຳນວນ 32 ຄົນ. ເມື່ອສອນຈົບແຕ່ລະບົດສອນ ແມ່ນໄດ້ໃຫ້ນັກສຶກສາເຮັດແບບທົດສອບຍ່ອຍ ປະຈຳບົດສອນແຕ່ລະບົດ

5. ຜູ້ຄົ້ນຄວ້າທົດສອບຫຼັງຮຽນກັບນັກສຶກສາຄູການເມືອງ ປີ3 ຈຳນວນ 32 ຄົນໂດຍໃຊ້ບົດທົດສອບດຽວກັນກັບກ່ອນຮຽນໃນ 4 ບົດສອນ, ບົດສອນລະ 5 ຂໍ້ ລວມ 20 ຂໍ້

6. ທົດສອບຜົນສຳເລັດທາງການຮຽນຫຼັງຈາກຮຽນຈົບ 4 ບົດສອນແລ້ວ ແລະ ນຳເອົາແບບວັດຄວາມເພິ່ງພໍໃຈມາສອບຖາມກັບນັກສຶກສາຄູການເມືອງ ປີ 3 ຈຳນວນ 32 ຄົນ

7. ນຳແບບທົດສອບມາກວດໃຫ້ຄະແນນ ແລະ ແບບສອບຖາມຄວາມເພິ່ງພໍໃຈເພື່ອນຳຂໍ້ມູນໄປວິເຄາະ.

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

***ການວິເຄາະຂໍ້ມູນ:*** ຜູ້ຄົ້ນຄວ້າໄດ້ດຳເນີນການວິເຄາະຂໍ້ມູນ ທີ່ໄດ້ຈາກການທົດລອງໂດຍໃຊ້ໂປຣແກຣມຄອມພິວເຕີສຳເລັດຮູບ ດັ່ງນີ້:

- ການຄຳນວນຫາປະສິດທິພາບຂອງບົດສອນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື(LT) ກັບນັກສຶກສາຄູການເມືອງປີທີ 3 ໂດຍຫາຄ່າປະສິດທິພາບຂອງຂະບວນການ E1 ແລະ ປະສິດທິຜົນຂອງຜົນໄດ້ຮັບ E2.
- ຄຳນວນຫາຄ່າດັດສະນີປະສິດທິຜົນ (E.I) ເພື່ອຫາຄ່າດັດສະນີປະສິດທິຜົນ ຂອງຄວາມກ້າວໜ້າທາງດ້ານການພັດທະນາທາງການຮຽນ ຂອງນັກສຶກສາ ປີ3 ສາຂາ ຄູການເມືອງ
- ຄຳນວນຫາການວັດຄວາມເພິ່ງພໍໃຈຂອງນັກສຶກສາປີ3 ຄູການເມືອງ ທີ່ມີຕໍ່ການຈັດການຮຽນ-ການສອນ ວິຊາເສດຖະສາດການເມືອງ ໂດຍໃຊ້ ການສອນແບບການຮຽນຮູ້ແບບກຸ່ມຮ່ວມມື (LT), ຈາກນັ້ນນຳມາຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ແລ້ວນຳໄປແປຜົນຕາມເກນ (ບຸນຊົມ ສີສະອາດ, 2545, ໜ້າ. 100).

***ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ:***

- **ຫາຄ່າສະເລ່ຍ** ($\bar{X}$: Mean) ໂດຍໃຊ້ສູດຄິດໄລ່

$$\bar{X}=\frac{\sum X}{N}$$

- **ຄ່າຜັນປ່ຽນມາດຖານ** (S.D. Standard Deviation) (ສົມນຶກ ພັດທິຍະທານີ, 2552)

$$\mathrm{S.D} = \sqrt{\frac{N\sum X^2-(\sum X)^2}{N(N-1)}}$$

S.

- **ສະຖິຕິວິເຄາະຄຸນນະພາບຂອງເຄື່ອງມື**

ໂດຍໃຊ້ສູດ ດັດສະນີຄວາມສອດຄ່ອງ IOC ດັ່ງນີ້

$$\mathrm{IOC}=\frac{\sum R}{N}$$

-ສະຖິຕິຄານວນຫາດັດສະນີປະສິດທິຜົນ (Effectiveness Index: E.I) ເພື່ອຫາຄ່າ ຂອງຄວາມກ້າວໜ້າທາງດ້ານການພັດທະນາທາງການຮຽນ

$$E.I = \frac{p_2 - p_1}{Total - p_1}$$

-ສະຖິຕິຫາຄ່າປະສິດທິພາບຂອງບົດສອນ

$$E_1 = \frac{\frac{\sum X}{N}}{A} \times 100$$

$$E_2 = \frac{\frac{\sum Y}{N}}{B} \times 100$$

-ສະຖິຕິຫາຄ່າຄວາມຍາກງ່າຍ (P) ຂອງແບບທົດສອບທີ່ສ້າງເປັນລາຍຂໍ້ (ສົມບັດ ທ້າຍເຮືອຄຳ, 2553, ໜ້າ. 92)

$$P = \frac{R}{N}$$

- ວິເຄາະຫາຄ່າອຳນາດຈຳແນກຂອງແບບທົດສອບ

(ສົມບັດ ທ້າຍເຮືອຄຳ, 2553, ໜ້າ. 92-93)

$$r = \frac{P_H - P_L}{n}$$

**7) ຊອກຫາຄວາມເຊື່ອໝັ້ນຂອງແບບທົດສອບ**

ໃຊ້ສູດ Kuder-Richardson (ອ້າງໃນ ສົມບັດ ທ້າຍເຮືອຄຳ, 2553, ໜ້າ. 97) ເຊິ່ງມີ 2 ສູດຄື: KR-20 KR-21 , ເຊິ່ງໃນບົດຄົ້ນຄວ້ານີ້ ໄດ້ໃຊ້ສູດ KR-20 ເຊິ່ງສູດ KR-20 ໃຊ້ໄດ້ກັບເຄື່ອງມື ທີ່ໃຫ້ຄະແນນ 0-1.

$$r_{tt} = \frac{k}{k-1}\left\{1 - \frac{\sum p_i q_i}{S_x^2}\right\}$$

ຄະແນນ ຜູ້ຖືກທົດສອບທັງໝົດ ໂດຍໃຊ້ສູດ

$$s_x^2 = \frac{n\Sigma \times^{2-} (\Sigma\times)^2}{n(n-1)}$$

-ຊອກຫາຄ່າຄວາມເຊື່ອໝັ້ນຂອງແບບວັດຄວາມເພິ່ງພໍໃຈ ໂດຍໃຊ້ α ຂອງ Cronbach (ລ້ວນ ສາຍຍົດ ແລະ ອັງຄະນາ ສາຍຍົດ, 2543) ດັ່ງນີ້:

$$\propto = \frac{n}{n-1}\left\{1 - \frac{\Sigma S_i^2}{S_t^2}\right\}$$

## 4. ຜົນການຄົ້ນຄວ້າ

*4. 1 ຜົນການວິເຄາະຫາປະສິດທິພາບຂອງຂະບວນການຮຽນ-ການສອນ E1/ E2*

ປະສິດທິພາບຂອງຂະບວນການຈັດການຮຽນ-ການສອນວິຊາເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ສໍາລັບນັກສຶກສາປີທີ 3 ສາຂາຄູ ວິທະຍາສາດການເມືອງ ພາກວິຊາຄູວິທະຍາສາດສັງຄົມ, ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ, ພົບວ່າ ມີຄ່າ E1 ເທົ່າກັບ 88.44 ແລະ E2 ເທົ່າກັບ 87.50. ໂດຍຕາມເກນ E1/ E2 ເທົ່າກັບ 80/ 80 ໃນຈໍານວນ 4 ບົດສອນ ໂດຍລວມພົບວ່າ ສູງກວ່າເກນທີ່ໄດ້ກໍານົດໄວ້ຄື E1/ E2 ເຊິ່ງເທົ່າກັບ 88.44 / 87.50 ແຕ່ເມື່ອຈໍາແນກເປັນແຕ່ລະບົດສອນພົບວ່າ:

**ບົດສອນທີ 1** ປະສິດທິພາບຂອງຂະບວນການຈັດການຮຽນການສອນ ວິຊາ ເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ມີຄ່າ E1 = 88.12 ; $\overline{X}$ = 8.81 ; S.D = 1.77

**ບົດສອນທີ 2** ປະສິດທິພາບຂອງຂະບວນການຈັດການຮຽນການສອນ ມີຄ່າ E1 = 86.25 ; $\overline{X}$ = 8.62 ; S.D = 1.53

**ບົດສອນທີ 3** ປະສິດທິພາບຂອງຂະບວນການຈັດການຮຽນການສອນ ມີຄ່າ E1 = 89.37 ; $\overline{X}$ = 8.93 ; S.D = 1.75

**ບົດສອນທີ 4** ປະສິດທິພາບຂອງຂະບວນການຈັດການຮຽນການສອນ ມີຄ່າ E1 =90.00 ; $\overline{X}$ = 9.00 ; S.D = 1.57

*4.2 ຜົນວິເຄາະປະສິດທິຜົນຂອງຄວາມກ້າວໜ້າທາງດ້ານການພັດທະນາທາງການຮຽນຂອງນັກສຶກສາ*

ຜູ້ຄົ້ນຄວ້າໄດ້ວິເຄາະຄ່າດັດສະນີປະສິດທິຜົນທາງການຮຽນຂອງນັກສຶກສາໃນການການຮຽນ ວິຊາ ເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ຈາກຄະແນນທົດສອບວັດຜົນສໍາເລັດກ່ອນການຮຽນ ແລະ ຫຼັງການຮຽນຂອງນັກສຶກສາ, ເຊິ່ງຜົນການວິເຄາະສະແດງອອກຄື: ດັດສະນີປະສິດທິຜົນທາງການຮຽນຂອງນັກສຶກສາໃນການການຮຽນ ວິຊາ ເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ມີຄ່າເທົ່າກັບ 0.80 ຫຼື ເທົ່າກັບ 80 ສ່ວນຮ້ອຍ. ສະແດງວ່າ ການພັດທະນາການຈັດການຮຽນການສອນ ວິຊາ ເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ສາມາດເຮັດໃຫ້ຜູ້ຮຽນມີຄວາມຮູ້ເພີ່ມຂຶ້ນເຖິງ 80 ສ່ວນຮ້ອຍ.

*4.3 ຜົນການວິເຄາະຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການນໍາໃຊ້ວິທີສອນແບບກຸ່ມຮ່ວມມື (LT)*

ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ກັບການຈັດການຮຽນ-ການສອນ ວິຊາ ເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ໂດຍລວມ ແລະ ແຕ່ລະດ້ານ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ($\overline{X}$ = 3.89, S.D = 0.97), ແຕ່ເມື່ອພິຈາລະນາໃນແຕ່ລະດ້ານ ພົບວ່າ ດ້ານທີ່ມີຄ່າສະເລ່ຍສູງ

ຄື ດ້ານການຈັດກິດຈະກຳການຮຽນ-ການສອນ ມີຄວາມເພິ່ງພໍໃຈຫຼາຍ ( $\overline{X}$ = 4.25, S.D = 1.01), ຮອງລົງມາແມ່ນດ້ານເນື້ອໃນບົດຮຽນ ມີຄວາມເພິ່ງພໍໃຈຫຼາຍ ( $\overline{X}$ = 3.89, S.D = 0.88), ແລະ ດ້ານການວັດແລະປະເມີນຜົນ ມີຄວາມເພິ່ງພໍໃຈຫຼາຍ ( $\overline{X}$= 3.75, S.D =1.02) , ສ່ວນດ້ານທີ່ມີຄ່າສະເລ່ຍຕ່ຳກວ່າທຸກດ້ານແມ່ນ ດ້ານ ສື່ການຮຽນ-ການສອນ ມີຄວາມເພິ່ງພໍໃຈຫຼາຍ ( $\overline{X}$= 3.67, S.D =0.97).

## 5. ອະພິປາຍຜົນ

ຈາກການສຶກສາຄົ້ນຄວ້າການຈັດການຮຽນ-ການສອນວິຊາເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ສຳລັບນັກສຶກສາປີທີ 3 ສາຂາຄູການເມືອງ ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ , ຜູ້ຄົ້ນຄວ້າໄດ້ນຳເອົາປະເດັນສາຄັນທີ່ຄົ້ນພົບມາອະພິປາຍຕາມຈຸດປະສົງຕາມຂັ້ນຕອນລຸ່ມນີ້:

ບົດສອນວິຊາ ເສດຖະສາດການເມືອງ ໂດຍໃຊ້ວິທີສອນແບບກຸ່ມຮ່ວມມື ເທັກນິກ (LT) ມີປະສິດທິພາບເທົ່າກັບ 88.44 / 87.50 ສູງກວ່າເກນທີ່ຕັ້ງໄວ້ 80/80. ໝາຍຄວາມວ່າ ນັກຮຽນໄດ້ຄະແນນສະເລ່ຍຈາກການເຮັດກິດຈະກຳ ແລະ ແບບປະເມີນພຶດຕິກຳລະຫວ່າງຮຽນແຕ່ລະບົດສອນຈຳນວນ 4 ບົດ ຄິດເປັນສ່ວນຮ້ອຍແມ່ນ 88.44 ສ່ວນຮ້ອຍ ແລະ ໄດ້ຄະແນນສະເລ່ຍຈາກບົດທົດສອບວັດຜົນສຳເລັດທາງການຮຽນພາຍຫຼັງທີ່ຈົບການຮຽນ-ການສອນ 4 ບົດ ຄິດເປັນສ່ວນຮ້ອຍ ແມ່ນ 87.50. ສະແດງວ່າ ບົດສອນວິຊາ ເສດຖະສາດການເມືອງ ໂດຍໃຊ້ວິທີສອນແບບກຸ່ມຮ່ວມມື ເທັກນິກ (LT) ທີ່ສ້າງຂຶ້ນມີປະສິດທິພາບສູງ ເນື່ອງຈາກວ່າ ບົດສອນທີ່ສ້າງຂຶ້ນ ແມ່ນໄດ້ຜ່ານຂະບວນການສ້າງຕາມຂັ້ນຕອນຢ່າງເປັນລະບົບ, ຖືກຕາມຂັ້ນຕອນ ແລະ ວິທີການທີ່ເໝາະສົມເຊັ່ນ: ຫຼັກສູດ, ເນື້ອໃນວິຊາ, ກິດຈະກຳ, ການໃຊ້ສື່ການຮຽນການສອນ ແລະ ຜ່ານຂະບວນການຫາຄຸນະພາບ ແລະ ປະເມີນຄຸນນະພາບຂອງເຄື່ອງມືທັງຊຸດຈາກຜູ້ຊ່ຽວຊານ ແລະ ໄດ້ນຳໄປທົດລອງສອນກ່ອນນຳໄປໃຊ້ໃນກຸ່ມທົດລອງ. ການຮຽນ-ການສອນ ໂດຍການນຳໃຊ້ ກິດຈະກຳການຮຽນຮູ້ແບບກຸ່ມຮ່ວມມື ເທັກນິກ (LT) ເປັນກິດຈະກຳການຮຽນທີ່ຈັດໃຫ້ຜູ້ຮຽນໄດ້ຮຽນຮູ້ຮ່ວມກັນເປັນກຸ່ມນ້ອຍ ກຸ່ມລະ 4 - 6 ຄົນ. ເຊິ່ງສະມາຊິກພາຍໃນກຸ່ມໄດ້ ສະຫຼັບຄວາມສາມາດກັນລະຫວ່າງຜູ້ຮຽນ ເກັ່ງ, ກາງ , ອ່ອນ. ເປັນວິທີທີ່ສົ່ງເສີມໃຫ້ຜູ້ຮຽນທີ່ມີຄວາມສາມາດແຕກຕ່າງກັນໄດ້ຮຽນຮູ້ຮ່ວມກັນ, ສະມາຊິກທຸກຄົນໃນກຸ່ມໄດ້ແລກປ່ຽນຄວາມຄິດຄວາມເຫັນ-ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຍອມຮັບເຊິ່ງກັນ ແລະ ກັນ ມີຄວາມຮັບຜິດຊອບຕໍ່ຕົນເອງ ແລະ ຮັບຜິດຊອບຕໍ່ກິດຈະກຳກຸ່ມ ເພື່ອໃຫ້ບັນລຸຄວາມສຳເລັດຂອງກຸ່ມ. ເນື່ອງຈາກປັດໃຈສະໜັບສະໜູນຕ່າງໆ ເຫຼົ່ານັ້ນ ຈຶ່ງສົ່ງຜົນໃຫ້ແຜນການສອນ ວິຊາ ວິຊາ ເສດຖະສາດການເມືອງ ໂດຍໃຊ້ວິທີສອນແບບກຸ່ມຮ່ວມມື ເທັກນິກ (LT) ທີ່ສ້າງຂຶ້ນມີປະສິດທິພາບສູງກວ່າເກນທີ່ຕັ້ງໄວ້. ເຊິ່ງຜົນການຄົ້ນຄວ້າສອດຄ່ອງກັບຜົນການສຶກສາຂອງ ສະຫງ່າ ແກ້ວບຸນມີ (2016) ພົບວ່າ: ນັກສຶກສາທີ່ໄດ້ຮັບການຮຽນ-ການສອນໂດຍໃຊ້ຮູບແບບການຮຽນ - ການສອນເທັກນິກ LT ວິຊາ ການເມືອງ ເລື່ອງ ເສດຖະສາດການເມືອງ ຂອງນັກສຶກສາ ສາຍຄູປະຖົມ ລະບົບ 12+4 ປີ 3 ມີປະສິດທິພາບສູງກວ່າເກນທີ່ຕັ້ງໄວ້ ເທົ່າກັບ 84.18/94.60 ເຊິ່ງເປັນໄປຕາມເກນມາດຕະຖານ 80/80 ທີ່ກຳນົດໄວ້; ສອດຄ່ອງກັບຜົນການສຶກສາຂອງ ສົມສີ ຢ່າງຕັ້ງມົວ (2016) ສຶກສາການຈັດການຮຽນ-ການສອນ ວິຊາສຶກສາພົນລະເມືອງໂດຍໃຊ້ ຮູບແບບຮຽນຮູ້ຮ່ວມກັນ (LT) ສຳລັບນັກຮຽນຊັ້ນມັດທະຍົມ ປີທີ 5 ທີ່ໂຮງຮຽນ ມສ ວຽງໄຊ, ເມືອງວຽງໄຊ, ແຂວງຫົວພັນ. ຜົນການສຶກສາຄົ້ນຄ້ວາພົບວ່າ: ປະສິດທິພາບຂອງບົດສອນການຮຽນຮູ້ຮ່ວມມືກັນ ເລື່ອງ ໂລກະທັດວັດຖຸນິຍົມ ແລະ ວິທີວິທະຍາ ຂອງນັກຮຽນຊັ້ນ ມ.5 ໂດຍການຈັດການຮຽນຮູ້ຮ່ວມມືກັນ (LT) ມີຄ່າເທົ່າກັບ 86.25/86.66 ເຊິ່ງມີປະສິດທິພາບສູງກວ່າເກນທີ່ຕັ້ງໄວ້ 80/80. ສອດຄ່ອງກັບຜົນການສຶກສາຂອງ ສອນທະວິສຸກ ປ້ອງວັນນະຄົມ (2018) ພົບວ່າ: ນັກສຶກສາທີ່ໄດ້ຮັບການຮຽນ-ການສອນໂດຍໃຊ້ຮູບແບບການຮຽນ - ການສອນເທັກນິກ LT ວິຊາປະຊາກອນສຶກສາ ແລະ ສິ່ງແວດລ້ອມ ຂອງນັກສຶກສາປີທີ 2 ສາຍຄູ ICT ພື້ນຖານ ມີປະສິດທິພາບສູງກວ່າເກນທີ່ຕັ້ງໄວ້ ເທົ່າກັບ 82.77/85.41 ເຊິ່ງເປັນໄປຕາມເກນມາດຕະຖານ 80/80 ທີ່ກຳນົດໄວ້; ສອດຄ່ອງກັບຜົນການສຶກສາຂອງ ໂສຣັດ ແສນຄຳ (2560) ສຶກສາກ່ຽວກັບການພັດທະນາການຮຽນຮູ້ແບບຮ່ວມມືດ້ວຍເທັກນິກ LT ທີ່ມີຜົນຕໍ່ ຜົນສຳເລັດທາງການຮຽນ ວິຊາວິທະຍາສາດ ເລື່ອງ ສານໃນຊີວິດປະຈຳວັນ ຂອງນັກຮຽນຊັ້ນປະຖົມສຶກສາປີທີ່ 6. ຜົນຂອງການສຶກສາພົບວ່າ: ຊຸດກິດຈະກຳການຮຽນຮູ້ແບບຮ່ວມມືດ້ວຍເທັກນິກ LT ມີປະສິດທິພາບສູງກວ່າເກນ 75/75; ສອດຄ່ອງກັບຜົນການສຶກສາຂອງ ວັນລະພາ ເກັ່ງອັກສອນ (2561) ພົບວ່າ: ຜົນສຳເລັດທາງການຮຽນວິຊາບັນຊີກິດຈະການພິເສດ ຂອງນັກຮຽນລະດັບວິຊາຊີບ ປີທີ 2 ສາຂາວິຊາການບັນຊີ ໂດຍໃຊ້ຮູບແບບການຮຽນຮູ້ແບບຮ່ວມມື ເທັກນິກ LT ມີປະສິດທິພາບສູງກວ່າເກນ ຮ້ອຍລະ 80.

ຜົນຄົ້ນຄວ້າ ດັດສະນີະສິດທິຜົນການຮຽນວິຊາເສດຖະສາດການເມືອງ ໂດຍໃຊ້ວິທີສອນແບບກຸ່ມຮ່ວມມື ເທັກນິກ (LT) ມີຄ່າ 0.803. ສະແດງວ່າຜູ້ຮຽນມີຄວາມກ້າວໜ້າໃນ

ການຮຽນເພີ່ມຂຶ້ນ ຄິດເປັນ ສ່ວນຮ້ອຍເທົ່າກັບ 80%. ເນື່ອງຈາກວ່າ ການຮຽນ ວິຊາເສດເສດຖະສາດການເມືອງ ໂດຍໃຊ້ວິທີສອນແບບກຸ່ມຮ່ວມມື ເທັກນິກ (LT) ແມ່ນ ເປັນກິດຈະກຳທີ່ນັກຮຽນເຮັດວຽກເປັນກຸ່ມ ເຊິ່ງໃນຄະນະທີ່ດຳເນີນງານນັ້ນ ນັກຮຽນໄດ້ຊ່ວຍກັນຄິດ ຊ່ວຍກັນຕອບຄຳຖາມ, ສົ່ງເສີມໃຫ້ນັກຮຽນຮູ້ຈັກຊ່ວຍເຫຼືອເກື້ອກູນ, ເພິ່ງພາອາໄສ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ພະຍາຍາມໃຫ້ສະມາຊິກທຸກຄົນມີສ່ວນຮ່ວມໃນກິດຈະກຳກຸ່ມ ເຮັດໃຫ້ ທຸກຄົນເຂົ້າໃຈທີ່ມາຂອງຄຳຕອບ ເຊິ່ງເປັນຜົນໃຫ້ທຸກຄົນ ຮຽນຮູ້ຮ່ວມກັນຢ່າງມີຄວາມສຸກ, ບໍ່ເກີດການເບື່ອໜ່າຍຕໍ່ການຮຽນ ທັງມີຄວາມກະຕືລືລົ້ນໃນການຮຽນ. ສະນັ້ນຈາກການຮຽນໂດຍໃຊ້ວິທີສອນແບບກຸ່ມຮ່ວມມື ເທັກນິກ (LT) ຈຶ່ງເຮັດໃຫ້ຜົນການຮຽນຂອງນັກຮຽນມີການພັດທະນາຂຶ້ນເຖິງ 80%. ເຊິ່ງຜົນການຄົ້ນຄວ້າສອດຄ່ອງກັບຜົນການຄົ້ນຄວ້າຂອງ ສົມສີ ຢ່າງຕັ່ງມົວ (2016) ສຶກສາການຈັດການຮຽນ-ການສອນ ວິຊາສຶກສາພົນລະເມືອງໂດຍໃຊ້ ຮູບແບບຮຽນຮູ້ຮ່ວມກັນ (LT) ສຳລັບນັກຮຽນຊັ້ນມັດທະຍົມ ປີທີ 5 ທີ່ໂຮງຮຽນ ມສ ວຽງໄຊ, ເມືອງວຽງໄຊ, ແຂວງຫົວພັນ ພົບວ່າ: ດັດຊະນີປະສິດທິຜົນຂອງການຈັດການຮຽນຮູ້ຮ່ວມມືກັນ (LT) ມີຄ່າເທົ່າກັບ 0.74 ສະແດງວ່ານັກຮຽນມີຜົນສຳເລັດທາງການຮຽນເພີ່ມຂຶ້ນ ຫຼື ມີຄວາມກ້າວໜ້າທາງການຮຽນເພີ່ມຂຶ້ນຄິດເປັນ ສ່ວນຮ້ອຍເທົ່າກັບ 74 ສ່ວນຮ້ອຍ; ສອດຄ່ອງກັບຜົນການຄົ້ນຄວ້າຂອງ ສອນທະວີສຸກ ປ້ອງວັນນະຄົມ (2018) ສຶກສາກ່ຽວກັບການຈັດການຮຽນ- ການສອນວິຊາປະຊາກອນສຶກສາ ແລະ ສິ່ງແວດລ້ອມໂດຍການນຳໃຊ້ເທັກນິກ ພົບວ່າ: ດັດສະນີສິດທິຜົນ ມີຄ່າເທົ່າກັບ .07194 ຫຼື ເທົ່າກັບ 71.94 ສ່ວນຮ້ອຍ ສະແດງວ່າ ການຮຽນຮູ້ຂອງນັກສຶກສາມີການພັດທະນາເພີ່ມຂຶ້ນ 71.94 ສ່ວນຮ້ອຍ.

ຜົນການຄົ້ນຄວ້າກ່ຽວກັບຄວາມເພິງພໍໃຈຂອງນັກຮຽນທີ່ມີຕໍ່ການຈັດການຮຽນ-ການສອນວິຊາເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ຢູ່ໃນລະດັບຫຼາຍ. ເນື່ອງຈາກວ່າ ການຮຽນ ວິຊາເສດເສດຖະສາດການເມືອງ ໂດຍໃຊ້ວິທີສອນແບບກຸ່ມຮ່ວມມື ເທັກນິກ (LT) ແມ່ນ ເປັນກິດຈະກຳທີ່ນັກຮຽນໄດ້ເຮັດວຽກເປັນກຸ່ມທີ່ເປັນການສົ່ງເສີມໃຫ້ຜູ້ຮຽນທີ່ມີຄວາມສາມາດຕ່າງກັນໄດ້ຮຽນຮູ້ຮ່ວມກັນ, ມີປະຕິສຳພັນທີ່ດີຕໍ່ກັນຕໍ່ກັນ, ຊ່ວຍເຫຼືອເກື້ອກູນ, ເພິ່ງພາ ເຊິ່ງກັນ ແລະ ກັນ. ພ້ອມທັງມີການປະເມີນ-ການວິເຄາະຂະບວນການກຸ່ມ ແລະ ການໃຫ້ລາງວັນກຸ່ມ. ເຊິ່ງການວິເຄາະຂະບວນການກຸ່ມເປັນຍຸດທະວິທີໜຶ່ງທີ່ສົ່ງເສີມໃຫ້ກຸ່ມຕັ້ງໃຈເຮັດວຽກເພາະຮູ້ວ່າຈະໄດ້ຮັບຂໍ້ມູນຍ້ອນກັບ ແລະ ຊ່ວຍຝຶກທັກສະການຮູ້ຄິດ, ຮູ້ປະກອບຄຳເຫັນ ທັງສາມາດ ປະເມີນພຶດຕິກຳຂອງຕົນໄດ້ ເຊິ່ງເປັນຜົນໃຫ້ຜູ້ຮຽນເຫັນຄຸນຄ່າຂອງຕົນເອງຫຼາຍຂຶ້ນ, ນັກຮຽນມີຄວາມກະຕືລືລົ້ນ ແລະ ມີຄວາມສຸກ ໃນການຮຽນ ສິ່ງຜົນໃຫ້ເກີດແຮງຈູງໃຈໃນການຮຽນຫຼາຍຂຶ້ນ. ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ ໂສຣັດ ແສນຄຳ (2560) ສຶກສາກ່ຽວກັບ ການພັດທະນາການຮຽນຮູ້ແບບຮ່ວມມືດ້ວຍເທັກນິກ LT ທີ່ມີຜົນຕໍ່ ຜົນສຳເລັດທາງການຮຽນ ວິຊາວິທະຍາສາດ ເລື່ອງ ສານໃນຊີວິດປະຈຳວັນ ຂອງນັກຮຽນຊັ້ນປະຖົມສຶກສາປີທີ່ 6 ພົບວ່າ:ນັກຮຽນ ມີຄວາມເພິ່ງພໍໃຈ ຕໍ່ການຈັດກິດຈະກຳການຮຽນຮູ້ແບບຮ່ວມມືດ້ວຍເທັກນິກ LT ຢູ່ໃນລະດັບຫຼາຍ; ສອດຄ່ອງກັບຜົນການຄົ້ນຄວ້າຂອງ ອັນລະພາ ເກັ່ງອັກສອນ (2561) ສຶກສາການກິດຈະກຳການຮຽນຮູ້ ໂດຍໃຊ້ຮູບແບບການຮຽນຮູ້ແບບຮ່ວມມື ເທັກນິກ LT ເພື່ອພັດທະນາຜົນສຳເລັດທາງການຮຽນວິຊາບັນຊີກິດຈະການພິເສດ ຂອງນັກຮຽນລະດັບວິຊາຊີບ ປີທີ່ 2 ສາຂາວິຊາການບັນຊີ ພົບວ່າ: ນັກຮຽນ ມີຄວາມເພິ່ງພໍໃຈ ຕໍ່ການຈັດກິດຈະກຳການຮຽນຮູ້ແບບຮ່ວມມືດ້ວຍເທັກນິກ LT ຢູ່ໃນລະດັບຫຼາຍ

## 6. ສະຫຼຸບຜົນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ເປັນການສຶກສາການຈັດການຮຽນ-ການສອນວິຊາເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ສຳລັບນັກສຶກສາປີທີ 3 ສາຂາຄູການເມືອງ ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ. ການຄົ້ນຄວ້າມີຈຸດປະສົງ: 1) ເພື່ອສຶກສາປະສິດທິພາບຂອງບົດສອນວິຊາເສດຖະສາດການເມືອງ ໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT) ຕາມເກນມາດຕະຖານ 80/80; 2) ເພື່ອຫາດັດສະນີປະສິດທິຜົນທາງການຮຽນວິຊາ ເສດຖະສາດການເມືອງ ຂອງນັກສຶກສາປີ 3 ພາຍຫຼັງໄດ້ຮຽນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT) ແລະ 3) ເພື່ອສຶກສາຄວາມເພິ່ງພໍໃຈຕໍ່ການຮຽນວິຊາເສດຖະສາດການເມືອງ ຂອງນັກສຶກສາປີ3 ພາຍຫຼັງໄດ້ຮຽນ ໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT). ກຸ່ມທົດລອງ ແມ່ນ ນັກສຶກສາ ປີ 3 ສາຂາຄູການເມືອງ ພາກວິຊາຄູວິທະຍາສາດສັງຄົມ, ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ, ພາກຮຽນທີ I ສົກສຶກສາ 2019-2020 ຈຳນວນ 1 ຫ້ອງຮຽນ ມີນັກສຶກສາທັງໝົດ 32 ຄົນ. ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ ບົດສອນທີ່ນຳໃຊ້ເທັກນິກການສອນແບບ (LT) ເຂົ້າໃນການຮຽນ-ການສອນວິຊາເສດຖະສາດການເມືອງ ຈຳນວນ 4 ບົດສອນ ເຊິ່ງຄຸນນະພາບຂອງບົດສອນແຕ່ລະບົດແມ່ນເທົ່າກັບ IOC = 1.00. ແບບທົດສອບວັດຜົນການຮຽນວິຊາເສດຖະສາດການເມືອງ ຂອງນັກສຶກ

ສາຖູ ວິທະຍາສາດການເມືອງ ປີ 3, ຊະນິດຂໍ້ສອບແບບເລືອກຕອບ 4 ຕົວເລືອກ ຈຳນວນ 20 ຂໍ້ ເຊິ່ງມີຄ່າຄວາມຍາກຢູ່ລະຫວ່າງ P= 0.30-0.70 ; ຄ່າອຳນາດຈຳແນກ ຢູ່ລະຫວ່າງ r= 0.30-0.60 ແລະ ຄ່າຄວາມເຊື່ອໝັ້ນ ເທົ່າກັບ 0.83. ແບບສອບຖາມວັດຄວາມເພິ່ງພໍໃຈຕໍ່ການຮຽນ-ການສອນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (LT) ເຂົ້າໃນການສອນວິຊາເສດຖະສາດການເມືອງ ຂອງນັກສຶກສາຄູວິທະຍາສາດການເມືອງ ປີ 3. ເຊິ່ງແບບສອບຖາມແມ່ນເປັນແບບມາດຕາສ່ວນປະມານຄ່າ 5 ລະດັບຈຳນວນ 20 ຂໍ້ ເຊິ່ງ ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.79. ການວິເຄາະຂໍ້ມູນແມ່ນໄດ້ໃຊ້ ໂປຣແກຣມ SPSS ເພື່ອຄຳນວນຫາ ປະສິດທິພາບຂອງບົດສອນ, ປະສິດທິຜົນຂອງການຮຽນ, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

ຜົນການຄົ້ນຄວ້າການຈັດການຮຽນ-ການສອນວິຊາເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ສຳລັບນັກສຶກສາປີທີ 3 ສາຂາຄູການເມືອງ ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສະຫຼຸບໄດ້ດັ່ງນີ້:

ບົດສອນ ວິຊາ ເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ສຳລັບນັກສຶກສາປີທີ 3 ສາຂາຄູ ວິທະຍາສາດການເມືອງ, ມີປະສິດທິພາບຂອງຂະບວນການ E1 = 88.44 ແລະ ປະສິດທິພາບຂອງຜົນສຳເລັດຂອງການຮຽນ E2 = 87.50 ສະແດງວ່າຊຸດການສອນທີ່ສ້າງຂຶ້ນ ມີປະສິດທິພາບ E1/ E2 = 88.44 / 87.50, ເຊິ່ງສູງກວ່າເກນທີ່ກຳນົດໄວ້ 80/80

ດັດສະນີປະສິດທິຜົນການຮຽນ ວິຊາ ເສດຖະສາດການເມືອງ ຂອງນັກຮຽນ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ສຳລັບນັກສຶກສາປີທີ 3 ສາຂາຄູການເມືອງ, ເທົ່າກັບ 0.80 ຫຼື ເທົ່າກັບ 80 ສ່ວນຮ້ອຍ ໝາຍຄວາມວ່ານັກຮຽນມີຄວາມຮູ້ເພີ່ມຂຶ້ນໃນການຮຽນ ຄິດເປັນສ່ວນຮ້ອຍເທົ່າກັບ 80 ສ່ວນຮ້ອຍ.

ຄວາມເພິ່ງພໍໃຈຂອງນັກຮຽນ ທີ່ມີຕໍ່ການຈັດການຮຽນ-ການສອນວິຊາເສດຖະສາດການເມືອງ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ໂດຍລວມແມ່ນຢູ່ໃນລະດັບຫຼາຍ.

## 7. ຂໍ້ສະເໜີແນະ

*7.1 ຂໍ້ສະເໜີແນະ ສຳລັບການນຳເອົາວິທີສອນແບບ (LT) ໄປໃຊ້*

1) ເພື່ອຢາກໃຫ້ ການຈັດການຮຽນ-ການສອນ ໂດຍໃຊ້ເທັກນິກການສອນແບບກຸ່ມຮ່ວມມື (LT) ມີປະສິດທພາບຕາມເກນທີ່ຕັ້ງໄວ້ ຄູ ຜູ້ສອນຄວນ ສຶກສາຫຼັກການ, ວິທີການ ແລະ ຂັ້ນຕອນການສອນ ແບບກຸ່ມຮ່ວມມື (LT) ໃຫ້ເຂົ້າໃຈ ແລະ ລະອຽດ ໂດຍສະເພາະ ການຈັດເວລາໃນການເຮັດກິດຈະກຳໃຫ້ເໝາະສົມ ເພື່ອໃຫ້ນັກຮຽນໄດ້ດຳເນີນກິດຈະກຳໃຫ້ສຳເລັດຢ່າງມີປະສິດທິພາບ

2) ໃນການຈັດສະມາຊິກເຂົ້າແຕ່ລະກຸ່ມ ຄວນເອົາໃຈໃສ່ໃນການຈັດໃຫ້ມີຜູ້ຮຽນ 3 ລະດັບ : ເກັ່ງ, ກາງ ແລະ ອ່ອນ ຢູ່ກຸ່ມດຽວກັນ ເພື່ອຮັບປະກັນໃຫ້ທຸກຄົນໃນກຸ່ມໄດ້ປຶກສາຫາລື ແລກປ່ຽນຄວາມຄິດເຫັນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອໃຫ້ສະມາຊິກທຸກຄົນໃນກຸ່ມໄດ້ຮັບຄວາມຮູ້ເທົ່າທຽມກັນ.

3) ສື່ການສອນ ຫຼື ອຸປະກອນທີ່ໃຊ້ເຂົ້າໃນການຮຽນ-ການສອນ ຄວນນຳໃຊ້ສື່ທີ່ໜ້າສົນໃຈ ທັງສາມາດຊ່ວຍໃຫ້ນັກຮຽນມີຄວາມເຂົ້າໃຈບົດຮຽນໄວຂຶ້ນ ແລະ ຊ່ວຍໃຫ້ການຈັດກິດຈະກຳກຸ່ມດຳເນີນໄປຢ່າງມີປະສິດທິພາບ

*7.2 ຂໍ້ສະເໜີແນະສຳລັບການສຶກສາຄົ້ນຄວ້າຄັ້ງຕໍ່ໄປ*

1) ຄວນສຶກສາເພື່ອປຽບທຽບຜົນສຳເລັດທາງການຮຽນ ໂດຍການຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື (LT) ກັບວິທີສິດສອນແບບອື່ນໆ.

2) ຄວນຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື (LT) ໃນວິຊາອື່ນ ຫຼື ວິທະຍາໄລອື່ນ ເພື່ອປຽບທຽບຜົນການຮຽນຂອງນັກຮຽນ.

## 8. ເອກະສານອ້າງອີງ


ສິຣິອອນ ວິຊາວຸດ. (2554). *ຈິດຕະວິທະຍາການຮຽນຮູ້.* ພິມຮັກ, ກຸງເທບ: ສານັກພິມ ມະຫາວິທະຍາໄລທາມະສາດ.

ສຸຮາງ ໂຄຕະກູນ. (2550). *ຈິດຕະວິທະຍາການສຶກສາ*. (ພິມຄັ້ງທີ່ 7) ພິມຮັກ, ກຸງເທບ: ສຳນັກພິມ ແຫ່ງຈຸລາລົງກອນ ມະຫາວິທະຍາໄລ.

ສຸວິດ ມູນຄຳ. (2546). *19 ວິທີການໃນການຈັດການຮຽນຮູ້ເພື່ອພັດທະນາຄວາມຮູ້ແລະທັກສະ.* ກຸງເທບ: ພາບພິມ

ສຸວິດມູນຄຳ ແລະ ອໍລະໄທມູນຄຳ. (2545). *21ວິທີຈັດການຮຽນຮູ້ເພື່ອພັດທະນາຂະບວນການຄິດ.* ກຸງເທບ: ພາບພິມ.

ໂສຮັດ ແສນຄຳ. (2560). ການພັດທະນາການຮຽນຮູ້ແບບຮ່ວມມືດ້ວຍເທັກນິກ LT ທີ່ມີຜົນຕໍ່ ຜົນສາເລັດທາງການຮຽນ ວິຊາວິທະຍາສາດ ເລື່ອງ ສານໃນຊີວິດປະຈຳວັນ ຂອງນັກຮຽນຊັ້ນປະຖົມສຶກສາປີທີ່6.Veridian E-*Journal, Silpakorn University*,Vol: 1, ISSN 1906 - 3431

ສອນທະວີສຸກ ປ້ອງວັນນະຄົມ. (2018). *ການຈັດການຮຽນ- ການສອນວິຊາປະຊາກອນສຶກສາ ແລະ ສິ່ງແວດລ້ອມໂດຍການນໍາໃຊ້ເຕັກນິກ LT ເພື່ອພັດທະນາການຮຽນຢ່າງມີປະສິດທິພາບຂອງນັກສຶກສາປີ2 ສາຍຄູ ICT ພື້ນຖານ ລະບົບ 12+4* (ວິທະຍານິພົນ ປະລິນຍາໂທ). ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ

ສົມສີ ຢ່າງຕັ່ງມົວ. (2016). *ການຈັດການຮຽນ-ການສອນ ວິຊາສຶກສາພົນລະເມືອງໂດຍໃຊ້ ຮູບແບບຮຽນຮູ້ຮ່ວມກັນ (LT) ສໍາລັບນັກຮຽນຊັ້ນມັດທະຍົມ ປີທີ 5 ທີ່ໂຮງຮຽນ ມສ ວຽງໄຊ, ເມືອງວຽງໄຊ, ແຂວງຫົວພັນ* (ວິທະຍານິພົນ ປະລິນຍາໂທ). ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ

ສົມນຶກ ພັດທິຍະທານີ. (2552). *ການວັດຜົນການສຶກສາ.* ກາລະສິນ: ປະສານການພິມ.

ສົມບັດ ທ້າຍເຮືອຄໍາ. (2553). *ລະບຽບວິທີວິໄສສໍາລັບມະນຸດສາດ ແລະ ສັງຄົມສາດ.* (ພິມຄັ້ງທີ່ 4) ມະຫາສາລະຄາມ:ໂຮງພິມມະຫາວິທະຍາໄລ ມະຫາສາລະຄາມ

ທິດສະນາ ແຂມມະນີ. (2548). *ຮູບແບບການຮຽນ-ການສອນ ທາງເລືອກທີ່ຫຼາກຫຼາຍ.* ກຸງເທບ: ມະຫາວິທະຍາໄລ ຈຸລາລົງກອນ.

ທິດສະນາ ແຂມມະນີ. (2552). *ສາດການສອນ ອົງຄວາມຮູ້ເພື່ອການຈັດຂະບວນການຮຽນຮູ້ທີ່ມີປະສິດທິພາບ.* ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

ທິບພາວັນ ທອງປານ. (2559). *ການຈັດການຮຽນຮູ້ໂດຍໃຊ້ການສອນຕາມແນວຄິດທິດສະດີສ້າງສັນນິຍົມຂອງ Underhill ຮ່ວມກັບເທກນິກກຸ່ມຜົນສໍາເລັດ (STAD) ເພື່ອພັດທະນາຄວາມສາມາດໃນການຄິດວິເຄາະ ແລະ ເພີ່ມຜົນສາເລັດທາງການຮຽນວິຊາວິທະຍາສາດຂອງນັກຮຽນຊັ້ນມັດທະຍົມປີທີ່ 2 ໂຮງຮຽນສະຕິປາກພະນັງ* (ວິທະຍານິພົນ ປະລິນຍາໂທ ສາຂາ ວິທະຍາສາດ). ມະຫາວິທະຍາໄລ ທາດຊະພັດ ນະຄອນສີທໍາມະຣາດ

ບຸນຊົມ ສີສະອາດ. (2545). *ການວິໄຈເບື້ອງຕົ້ນ.* ກຸງເທບ: ກຸງເທບສຸລິຍະສານ.

ລ້ວນ ສາຍຍົດ ແລະ ອັງຄະນາ ສາຍຍົດ. (2543). *ເທັກນິກການວັດຜົນການຮຽນຮູ້.* ກຸງເທບມະຫານະຄອນ: ສຸຣິຍະສານ.

ວິມົນລັດ ສູນທອນໂລດ. (2550). *ນະວັດຕະກໍາຕາມແນວຄິດແບບ Backward Design.* ກຸງເທບ: ຊ້າງທອງ.

ວາລະສານ ອາລຸນວັນໃໝ່. (2016). *ກອງປະຊຸມໃຫຍ່ຄັ້ງທີ່ X ພັກປະຊາຊົນປະຕິວັດລາວ.* ນະຄອນຫຼວງວຽງຈັນ: ໂຮງພິມແຫ່ງລັດ.

ວັນລະພາ ເກົ່າອັກສອນ. (2561). ສຶກສາການຈັດກິດຈະກໍາການຮຽນຮູ້ ໂດຍໃຊ້ຮູບແບບການຮຽນຮູ້ແບບຮ່ວມມື ເທັກນິກ LT ເພື່ອພັດທະນາຜົນສໍາເລັດທາງການຮຽນວິຊາບັນຊີກິດຈະການພິເສດ ຂອງນັກຮຽນລະດັບວິຊາຊີບ ປີທີ່ 2 ສາຂາວິຊາການບັນຊີ. *ວິທະຍາໄລອະຊີວະສຶກສາສັນຕິລາດ ໃນພຣະອຸປະຖໍາ*

ອາພອນ ໃຈທ່ຽງ. (2550). *ຫຼັກການສອນ. (ພິມຄັ້ງທີ 5)* ກຸງເທບ: ໂອດຽນສະໂຕ.